ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ສສຊ ເຂດເລືອກຕັ້ງທີ I ພົບປະ ທຫລ




ສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ IX ປະຈຳເຂດເລືອກຕັ້ງທີ I ນະຄອນຫຼວງ ວຽງຈັນ ຊຶ່ງນຳໂດຍທ່ານ ບຸນຕາ ເທບພະວົງ ກຳມະການສຳຮອງສູນກາງພັກ, ສະມາຊິກສະພາແຫ່ງຊາດ ຊຸດທີ IX ປະຈຳເຂດເລືອກຕັ້ງທີ I ນະຄອນຫຼວງວຽງຈັນ, ຮອງປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບຂອງສະພາແຫ່ງຊາດ ພ້ອມຄະນະ ໄດ້ພົບປະກັບການນຳ ແລະ ພະນັກງານຫຼັກແຫຼ່ງຂອງທະນາຄານແຫ່ງ ສປປ ລາວ (ທຫລ), ຄະນະອຳນວຍການທະນາຄານທຸລະກິດລັດ ໂດຍການຕ້ອນຮັບຂອງທ່ານ ປອ. ບຸນເຫຼືອ ສິນໄຊ ວໍຣະວົງ ເລຂາຄະນະບໍລິຫານງານພັກ, ຜູ້ວ່າການ ທຫລ ໃນວັນທີ 13 ມີນາ 2023 ຊຶ່ງໄດ້ດຳເນີນໄປເປັນເວລາເຄິ່ງວັນ ທີ່ ທຫລ.

ກອງປະຊຸມພົບປະຄັ້ງນີ້, ໄດ້ເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໃນຄັ້ງນີ້ ແລະ ວຽກງານຈຳນວນໜຶ່ງ; ທ່ານ ເພັດສະຖາພອນ ແກ້ວວົງວິຈິດ ຫົວໜ້າຫ້ອງການ ທຫລ ໄດ້ລາຍງານສະພາບການເຄື່ອນໄຫວລວມວຽກງານຂອງທະນາຄານແຫ່ງ ສປປ ລາວ ໃນປີ 2022 ຜ່ານມາ ແລະ ທິດທາງແຜນການປີ 2023 ໃຫ້ທີ່ປະຊຸມຮັບຊາບ; ຈາກນັ້ນ, ບັນດາ ສສຊ ປະຈຳເຂດເລືອກຕັ້ງທີ I ນະຄອນຫຼວງ ວຽງຈັນ ໂດຍມີທ່ານ ບຸນຕາ ເທບພະວົງ, ທ່ານ ພັທ ຈັນທະລາ ອຸດົມສຸກ ແລະ ທ່ານ ປອ. ນາງ ວາລີ ເວດສະພົງ ກໍ່ໄດ້ໃຫ້ກຽດເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ສ່ອງແສງໃຫ້ເຫັນການປະຕິບັດພາລະບົດບາດ ແລະ ໜ້າທີ່ຂອງອົງການນິຕິບັນຍັດ ທີ່ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນບັນດາເຜົ່າ ໂດຍສະເພາະຊາວນະຄອນຫຼວງວຽງຈັນ; ພ້ອມນັ້ນ, ບັນດາທ່ານ ສສຊ ກໍ່ໄດ້ນຳເອົາບາງຄຳຄິດຄຳເຫັນຂອງປະຊາຊົນ ທີ່ຕິດພັນກັບຂະ ແໜງການທະນາຄານ ນຳມາສະເໜີໃຫ້ແກ່ ທຫລ ສືບຕໍ່ປັບປຸງແກ້ໄຂເປັນຕົ້ນ: ການຄຸ້ມຄອງປະລິມານເງິນ $M_2$, ການຄຸ້ມຄອງອັດຕາເງິນເຟີ້, ການຄຸ້ມຄອງອັດຕາແລກປ່ຽນ ແລະ ອື່ນໆ ຈຳນວນໜຶ່ງ.





ໃນໂອກາດດັ່ງກ່າວ; ທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງ ກໍໄດ້ສະແດງຄວາມຂອບໃຈ ມາຍັງບັນດາທ່ານ ສສຊ ທີ່ໄດ້ໃຫ້ກຽດມາຢ້ຽມຢາມ ແລະ ນໍາເອົາເນື້ອໃນຈິດໃຈຜົນສໍາເລັດຂອງກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ມາເຜີຍແຜ່ຄະນະນໍາ ແລະ ພະນັກງານຫຼັກແຫຼ່ງທະນາຄານແຫ່ງ ສປປ ລາວ ແລະ ທະນາຄານທຸລະກິດລັດ ໄດ້ຮັບຮູ້ບັນດາຂໍ້ຄິດເຫັນຂອງສັງຄົມ ຕິດພັນຂະແໜງການທະນາຄານ ແລະ ທ່ານຍັງໄດ້ຊີ້ແຈງບາງບັນຫາດັ່ງກ່າວ ເພື່ອໃຫ້ ສສຊ ໃນນາມຕົວແທນປະຊາຊົນໄດ້ຮັບຮູ້, ເຂົ້າໃຈໃນບັນຫາດັ່ງກ່າວຕື່ມ.




**# ຂ່າວ: ຣັດສະໝີ ດວງສັດຈະ**

**# ພາບ: ສົມພິດ ທາມະວົງ**

# ແລກປ່ຽນເງິນຕາຊະຊາຍ ຜິດລະບຽບກົດໝາຍບ້ານເມືອງ